# ຮຽນຮູ້ວ່າ SUN Bucks ສາມາດຊ່ວຍເຫຼືອຄອບຄົວຂອງທ່ານໄດ້ແນວໃດ!

SUN Bucks ແມ່ນໂຄງການຜົນປະໂຫຍດດ້ານເຄື່ອງຍ່ອຍ ເພື່ອຊ່ວຍເຫຼືອຄອບຄົວຊື້ອາຫານໃນຊ່ວງລະດູຮ້ອນເມື່ອໂຮງຮຽນປິດ. ຄອບຄົວຈະໄດ້ຮັບເງິນ $120 ສຳລັບເດັກໃນໄວຮຽນທີ່ມີເງື່ອນໄຂແຕ່ລະຄົນ. ເດັກນ້ອຍທີ່ໄດ້ຮັບຜົນປະໂຫຍດເຫຼົ່ານີ້ ຍັງສາມາດເຂົ້າຮ່ວມໃນໂຄງການອາຫານລະດູຮ້ອນອື່ນໆໄດ້.

## ລູກຂອງຂ້ອຍມີສິດໄດ້ຮັບ SUN Bucks ບໍ?

ລູກຂອງທ່ານມີສິດໄດ້ຮັບ SUN Bucks ຖ້າ ກົງກັບເງື່ອນໄຂຢ່າງໜ້ອຍໜຶ່ງຂໍ້ດັ່ງຕໍ່ໄປນີ້:

- ຄອບຄົວຂອງທ່ານໄດ້ເຂົ້າຮ່ວມໃນ ໂຄງການຊ່ວຍເຫຼືອຊົ່ວຄາວສຳລັບຄອບຄົວທີ່ຂັດສົນ (Temporary Assistance for Needy Families) ຫຼື SNAP (Supplemental Nutrition Assistance Program, ໂຄງການຊ່ວຍເຫຼືອດ້ານໂພຊະນາການເສີມ) ແລ້ວ ແລະ ລູກຂອງທ່ານມີອາຍຸລະຫວ່າງ 8-18 ປີ.
- ລູກຂອງທ່ານເຂົ້າຮຽນໃນໂຮງຮຽນທີ່ສະໜອງ ໂຄງການອາຫານທ່ຽງແຫ່ງຊາດຂອງໂຮງຮຽນ (National School Lunch Program) ຫຼື ໂຄງການອາຫານເຊົ້າຂອງໂຮງຮຽນ (School Breakfast Program) ແລະ ລາຍຮັບຂອງຄອບຄົວຂອງທ່ານແມ່ນກົງກັບຂໍ້ກຳນົດສຳລັບອາຫານໂຮງຮຽນແບບບໍ່ເສຍຄ່າ ຫຼື ຫຼຸດລາຄາ. ທ່ານສາມາດສົ່ງຄຳຮ້ອງຂໍຮັບຜົນປະໂຫຍດດ້ານການສຶກສາ ແລະ ສິດທາງໂພຊະນາການ (Child Nutrition Eligibility and Education Benefit application) ຂອງເດັກຢູ່ທີ່ໂຮງຮຽນຂອງລູກທ່ານ ເພື່ອຊອກຮູ້ວ່າລູກຂອງທ່ານມີເງື່ອນໄຂໄດ້ຮັບອາຫານແບບບໍ່ເສຍຄ່າ ຫຼື ຫຼຸດລາຄາບໍ່.

## ຄອບຄົວຈະໄດ້ຮັບຜົນປະໂຫຍດ SUN Bucks ໄດ້ແນວໃດ?

ຄອບຄົວທີ່ມີສິດໄດ້ຮັບສ່ວນໃຫຍ່ບໍ່ຈຳເປັນຕ້ອງສະໝັກ ເພາະວ່າພວກເຂົາຈະໄດ້ຮັບການລົງທະບຽນເຂົ້າໃນ SUN Bucks ໂດຍອັດຕະໂນມັດ. ຄອບຄົວເຫຼົ່ານີ້ຈະໄດ້ຮັບບັດ SUN Bucks ທາງໄປສະນີໃນເດືອນມິຖຸນາ.

ຖ້າທ່ານບໍ່ໄດ້ຮັບການລົງທະບຽນໂດຍອັດຕະໂນມັດ, ທ່ານຍັງສາມາດສະໝັກໄດ້ໃນຊ່ວງລະດູຮ້ອນ.

## ຂ້ອຍຈະສະໝັກ SUN Bucks ໄດ້ແນວໃດ?

ເຂົ້າເບິ່ງ sunbucks.dshs.wa.gov ເພື່ອສະໝັກທາງອອນລາຍເປັນພາສາອັງກິດ. ທ່ານຍັງສາມາດສະແກນລະຫັດ QR ເພື່ອຊອກຫາຄຳຮ້ອງ SUN Bucks ທີ່ຖືກແປແລ້ວ ແລະ ພິມສຳເນົາອອກມາ.

ສົ່ງຄຳຮ້ອງທີ່ຕື່ມຂໍ້ມູນຄົບຖ້ວນແລ້ວໄປທີ່:
DSHS Customer Service Center
P.O. Box 11669
Tacoma, WA 98411-6699

ໃນເວລາສະໝັກ, ທ່ານຈະຖືກຮ້ອງຂໍໃຫ້ລະບຸຊື່, ໂຮງຮຽນ, ວັນເດືອນປີເກີດຂອງລູກທ່ານ, ທີ່ຢູ່ ແລະ ລາຍຮັບຂອງຄອບຄົວຂອງທ່ານ. ທ່ານບໍ່ຈຳເປັນຕ້ອງສະໜອງເອກະສານ ຫຼື ຂໍ້ມູນອື່ນໆ ໃນເວລາທີ່ທ່ານສະໝັກ. ທ່ານອາດຈະຕ້ອງສະໜອງຂໍ້ມູນເພີ່ມເຕີມກ່ອນທີ່ຈະສາມາດອອກຜົນປະໂຫຍດໃຫ້ໄດ້.

ມີຄຳຖາມກ່ຽວກັບຜົນປະໂຫຍດ SUN Bucks ຂອງທ່ານບໍ? ຕ້ອງການແກ້ໄຂທີ່ຢູ່ຂອງທ່ານບໍ?

ໂທຫາສູນຕິດຕໍ່ SUN Bucks ທີ່ເບີ 833-543-3230 ຫຼື TTY 800-833-6348

Washington Office of Superintendent of
PUBLIC INSTRUCTION